**ມິຊຊາອາທິດທີ 5 ກຳນົດບຳເພັນສິນບົ B**

**ວັນທີ 21 ມີນາ 2021**



**ພຣະວໍຣະສານໂດຍນັກບຸນຢວງ 12, 20-33**

ໃນເວລານັ້ນ, ມີຊາວເກັຣກໝູ່ໜຶ່ງມາບຸນສະຫລອງປາສກາ. ພວກເຂົາມາຫາຟີລິບຊາວບ້ານເບັດຊາອີດ, ແຂວງກາລີເລແລະບອກກັບເພິ່ນວ່າ: “ນາຍເອີຍ! ພວກຂ້າພະເຈົ້າຢາກພົບພຣະເຢຊູເຈົ້າ.” ຟີລິບຈຶ່ງໄປບອກກັບອັນເດຣ ແລ້ວອັນເດຣ ແລະຟີລິບ ກໍໄປຂ່າວໃຫ້ພຣະເຢຊູເຈົ້າຊາບ. ພຣະເຢຊູເຈົ້າຈຶ່ງກ່າວວ່າ: “ເວລາທີ່ບຸດມະນຸດຈະໄດ້ຮັບສີມຸງຄຸນມາເຖິງແລ້ວ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: “ເມັດເຂົ້າໃດທີ່ຕົກລົງດິນແລະບໍ່ຕາຍໄປ, ກໍຍັງຈະເປັນເມັດດຽວຢູ່ຄືເກົ່າ. ແຕ່ຖ້າມັນຕາຍໄປມັນກໍຈະເກີດຜົນມາກມາຍ. ຜູ້ໃດຮັກຊີວິດຂອງຕົນຈະເຮັດໃຫ້ມັນເສຍໄປ. ສ່ວນຜູ້ໃດກຽດຊັງຊີວິດຂອງຕົນໃນໂລກນີ້ ກໍຈະຮັກສາມັນໄວ້ເພື່ອຊີວິດນິຣັນດອນ. ຜູ້ໃດຮັບໃຊ້ເຮົາ ກໍໃຫ້ຕິດຕາມເຮົາມາ. ແລະເຮົາຢູ່ບ່ອນໃດເຂົາກໍຈະຢູ່ນຳບ່ອນນັ້ນດ້ວຍ. ຖ້າຜູ້ໃດຮັບໃຊ້ເຮົາ, ພຣະບິດາຂອງເຮົາກໍຈະໃຫ້ກຽດແກ່ຜູ້ນັ້ນ.

ບັດນີ້ເຮົາກຳລັງອຸກທຸກໃຈເຮົາຈະວ່າແນວໃດ? ໂອພຣະບິດາເຈົ້າ, ໂອພຣະບິດາເຈົ້າ, ໂຜດຊ່ວຍໃຫ້ລູກຫວິດຈາກເວລາອັນນັ້ນເຖີດ. ແຕ່ຕາມຈິງແລ້ວ, ລູກໄດ້ມາເພື່ອເວລານັ້ນແລ້ວ. ໂອພຣະບິດາເຈົ້າ, ໂຜດໃຫ້ກຽດແດ່ພຣະນາມຂອງພຣະອົງເທີ້ນ.” ແລ້ວມີສຽງດັງມາຈາກຟ້າວ່າ: “ແມ່ນແລ້ວເຮົາໄດ້ໃຫ້ກຽດພຣະນາມຂອງເຮົາແລ້ວ ແລະເຮົາຍັງຈະໃຫ້ກຽດຕໍ່ໄປອີກ.” ປະຊາຊົນຢູ່ທີ່ນັ້ນໄດ້ຍິນກໍພາກັນຄິດວ່າແມ່ນສຽງຟ້າຮ້ອງ. ລາງຄົນວ່າ: ເທວະດາອົງໜຶ່ງເວົ້າກັບເພິ່ນ. ພຣະເຢຊູເຈົ້າກ່າວຕອບວ່າ: “ສຽງທີ່ພວກເຈົ້າໄດ້ຍິນນີ້ ບໍ່ແມ່ນສຳລັບເຮົາ, ແຕ່ສຳລັບພວກເຈົ້າເອງ. ດຽວນີ້ແມ່ນເວລາໂລກຖືກຕັດສິນ. ດຽວນີ້ແມ່ນເວລາເຈົ້າໂລກຈະຕ້ອງຖືກໄລ່ອອກໄປ. ສ່ວນເຮົາ, ເມື່ອຈະຖືກຍົກຂຶ້ນຫວິດດິນແລ້ວ ເຮົາຈະດຶງແກ່ເອົາທຸກຄົນມາຫາເຮົາ.” ພຣະອົງກ່າວດັ່ງນີ້, ເພື່ອສະແດງໃຫ້ຮູ້ວ່າພຣະອົງຈະຕ້ອງສິ້ນພຣະຊົນແນວໃດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກເຢເຣມີເລົ່າໃຫ້ພວກເຮົາເຂົ້າໃຈວ່າ ເມື່ອພຣະເຈົ້າໄດ້ພາປະຊາກອນອິສຣາແອນອອກຈາກການເປັນຂ້ອຍທາດຂອງປະເທດເອຢິບ ພຣະອົງໄດ້ທຳສຳພັນໄມຕຣີກັບພວກເຂົາຜ່ານທາງພຣະບັນຍັດສິບປະການຊຶ່ງໂມແຊໄດ້ຮັບຈາກພຣະເຈົ້າບົນພູເຂົາຊີນາຍ. ເຖິງປານນັ້ນກໍດີ, ປະຊາກອນອິສຣາແອນກໍບໍ່ສັດຊື່ແລະເຊື່ອຟັງພຣະສຳພັນໄມຕຣີຊຶ່ງພຣະເຈົ້າກະທຳກັບພວກເຂົາຜ່ານທາງພຣະທຳບັນຍັດຂອງພຣະອົງ. ແຕ່ພຣະອົງກໍບໍ່ໄດ້ປະຖິ້ມພວກເຂົາ. ພຣະອົງຍັງທຳພັນທະສັນຍາອີກຄັ້ງໜຶ່ງກັບລູກຫລານຂອງພວກເຂົາ. ເທື່ອນີ້, ພຣະອົງຈະບໍ່ທຳພັນທະສັນຍາທີ່ຈາລຶກໄວ້ບົນແຜ່ນຫີນສີລາອີກ, ແຕ່ໃນດວງໃຈຂອງພວກເຂົານັ້ນເອງ. ເພື່ອໃຫ້ພວກເຂົາຊື່ສັດແລະນົບນອບເຊື່ອຟັງພຣະອົງ.

ສ່ວນໃນບົດອ່ານທີສອງ, ຈາກຈົດໝາຍເຖິງຊາວເຮເບຣີໄດ້ອະທິບາຍໃຫ້ພວກເຮົາເຂົ້າໃຈວ່າ ພຣະເຢຊູເຈົ້າເອງເຖິງວ່າເປັນພຣະບຸດພຣະເຈົ້າກໍຕາມ, ແຕ່ພຣະອົງກໍຍັງນົບນອບຕໍ່ພຣະບິດາຈົນເຖິງສິ້ນພຣະຊົນ. ດ້ວຍເຫດນີ້, ຜູ້ໃດເຊື່ອຟັງພຣະອົງ, ຜູ້ນັ້ນກໍໄດ້ຮອດຊີວິດ.

ໃນພຣະວໍລະສານ, ນັກບຸນຢວງໄດ້ຍົກໃຫ້ພວກເຮົາເຫັນວ່າການທໍລະມານແລະຕາຍຂອງພຣະເຢຊູເຈົ້ານັ້ນບໍ່ພຽງແຕ່ແມ່ນການສະແດງອອກເຖິງການນົບນອບເຊື່ອຟັງຕໍ່ພຣະບິດາເທົ່ານັ້ນ, ແຕ່ຍັງແມ່ນການທຳໃຫ້ກຽດມຸງຄຸນຂອງພຣະບິດາເຈົ້າມາເຖິງທຸກຄົນອີກດ້ວຍ. ແລະກຽດມຸງຄຸນຂອງພຣະບິດາເຈົ້າຄືໃຫ້ທຸກຄົນໄດ້ມີຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນ.

ກໍານົດບຳເພັນສິບເປັນເປັນຊ່ວງເວລາໃຫ້ພວກເຮົາໄດ້ເປີດຫູ, ເປີດໃຈເພື່ອຟັງສຽງຂອງພຣະເຈົ້າແລະຢ່າທຳໃຈແຂງກະດ້າງອີກຕໍ່ໄປ. ເພາະເປັນຊ່ວງເວລາແຫ່ງການຄືນດີ, ເປັນຊ່ວງເວລາແຫ່ງຄວາມຮອດ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ສຳນຶກໄດ້ວ່າ ຍ້ອນຮັກລູກພຣະອົງຈຶ່ງຍອມສະລະຊີວິດຂອງຕົນບົນໄມ້ກາງເຂນ. ຂໍໃຫ້ລູກສຳພັດໄດ້ເຖິງຄວາມຮັກຂອງພຣະອົງດ້ວຍການເປັນທຸກເຖິງບາບຢ່າງຈິງໃຈແລະເປີດໃຈຮັບການອະໄພໂທດຈາກພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ